## ບົດຮຽນ 21- ອັກຄະສາວົກເວົ້າເຖິງຊົນຊາດອິດສະຣາເອນ

ພຣະທຳກິດຈະການແມ່ນມາຕາມຫຼັງພຣະທຳມັດທາຍ, ມາລະໂກ, ລູກາ ແລະ ໂຢຮັນໃນພຣະຄຳພີໃໝ່. ພຣະທຳກິດຈະການແມ່ນຄ້າຍຄືກັບພາກຕໍ່ຂອງໜັງສືຂ່າວປະເສີດທັງສີ່ເຫຼັ້ມ ຊຶ່ງບອກເຖິງສິ່ງທີ່ເກີດຂຶ້ນຫຼັງຈາກພຣະທຳສີ່ເຫຼັ້ມ. ໄດ້ເກີດຫຍັງຂຶ້ນກັບອິດສະຣາເອນຫຼັງຈາກພຣະເຢຊູຄຣິດໄດ້ຟື້ນຄືນຈາກຄວາມຕາຍ ແລະ ສະເດັດສູ່ສະຫວັນແລ້ວ? ພວກອັກຄະສາວົກໄດ້ເຮັດຫຍັງ? ພວກອັກຄະສາວົກໄດ້ເຮັດພາລະກິດທີ່ພຣະເຢຊູຄຣິດຊົງມອບໝາຍໃຫ້, ສຳເລັດບໍ? ພວກເຮົາແນະນຳໃຫ້ທ່ານອ່ານພຣະທຳກິດຈະການໝົດທັງເຫຼັ້ມ ເພື່ອຊອກຫາຄຳຕອບຂອງຄຳຖາມເຫຼົ່ານີ້ ແລະ ຄຳຖາມອື່ນໆ ທີ່ທ່ານອາດຈະມີ. ແຕ່ໃນການສຶກສານີ້, ພວກເຮົາຈະສຸມໃສ່ເລື່ອງດຽວກັນທີ່ໄດ້ສຶກສາຢູ່ໃນບົດຮຽນກ່ອນໜ້າອີກເທື່ອໜຶ່ງ.

ຕໍ່ໄປນີ້ແມ່ນຄຳຖາມທີ່ພວກເຮົາຈະສຸມໃສ່: ອິດສະຣາເອນຍັງຢູ່ພາຍໃຕ້ກົດບັນຍັດຫຼັງຈາກທີ່ພຣະເຢຊູຄຣິດໄດ້ສິ້ນພຣະຊົນ, ເປັນຄືນມາຈາກຄວາມຕາຍ ແລະ ສະເດັດຂຶ້ນໄປສະຫວັນບໍ? ອິດສະຣາເອນຍັງເປັນປະເທດທີ່ພຣະເຈົ້າຊົງພໍພຣະໄທບໍ? ພວກເຂົາຍັງຊອກຫາລາຊະອານາຈັກເທິງແຜ່ນດິນໂລກບໍ? ພວກເຂົາໄດ້ປະກາດຂ່າວປະເສີດອັນໃດ?

## ພຣະບັນຍັດ

ພວກເຮົາເຫັນແລ້ວວ່າ ພຣະເຈົ້າໄດ້ມອບພຣະບັນຍັດໃຫ້ແກ່ຊາວອິດສະຣາເອນໃນພຣະຄຳພີເດີມ. ຊຶ່ງມີເລື່ອງການຖວາຍສັດບູຊາ, ພິທີຕັດ, ການຮັກສາວັນຊະບາໂຕ, ການຖືວັນບຸນຕ່າງໆ ແລະ ອື່ນໆ. ພວກເຮົາຍັງໄດ້ເຫັນວ່າ ອິດສະຣາເອນສືບຕໍ່ໃຊ້ຊີວິດຢູ່ພາຍໃຕ້ພຣະບັນຍັດໃນຕອນທີ່ພຣະທຳມັດທາຍ, ມາຣະໂກ, ລູກາ ແລະ ໂຢຮັນຖືກຂຽນຂຶ້ນ. ຕອນທີ່ພຣະທຳກິດຈະການຖືກຂຽນ, ພຣະເຢຊູຄຣິດໄດ້ສິ້ນພຣະຊົນຢູ່ເທິງໄມ້ກາງແຂນ ແລະ ເປັນຄືນມາຈາກຕາຍແລ້ວ. ໃນບົດທີໜຶ່ງຂອງກິດຈະການ, ພຣະອົງໄດ້ສະເດັດຂຶ້ນສູ່ສະຫວັນ. ຊາວອິດສະຣາເອນຍັງໃຊ້ຊີວິດຢູ່ພາຍໃຕ້ພຣະບັນຍັດ ຫຼັງຈາກການສິ້ນພຣະຊົນ, ການຟື້ນຄືນພຣະຊົນ ແລະ ການສະເດັດຂຶ້ນສູ່ສະຫວັນຂອງພຣະເຢຊູຄຣິດບໍ? ຫຼືວ່າໃນປັດຈຸບັນນີ້ ອິດສະຣາເອນໄດ້ເລີ່ມໃຊ້ຊີວິດພາຍໃຕ້ພຣະຄຸນ ແລະ ບໍ່ຢູ່ພາຍໃຕ້ກົດບັນຍັດດັ່ງທີ່ກ່າວໄວ້ໃນໂຣມ 6:14 ອີກແລ້ວ?

ຫຼາຍຄຣິສຕະຈັກສອນວ່າ ພວກສາວົກໄດ້ໃຊ້ຊີວິດພາຍໃຕ້ພຣະຄຸນຫຼັງຈາກພຣະເຢຊູຄຣິດສິ້ນພຣະຊົນ. ແຕ່ມາເບິ່ງວ່າ ພຣະທຳກິດຈະການຕອບຄຳຖາມຂອງເຮົາແນວໃດ. ພວກເຮົາຈະສຸມໃສ່ເຈັດບົດທຳອິດຂອງພຣະທຳກິດຈະການເປັນຫຼັກໃນເວລານີ້ (ແລ້ວອະທິບາຍເຫດຜົນພາຍຫຼັງ), ໃຫ້ພວກເຮົາອະທິບາຍບົດທີ 8-28 ແບບສັງເຂບ. ກ່ອນອື່ນພວກເຮົາຄວນສັງເກດວ່າ ບໍ່ມີບ່ອນໃດໃນເຈັດບົດທຳອິດຂອງພຣະທຳກິດຈະການທີ່ບອກວ່າ ຊາວອິດສະຣາເອນບໍ່ໄດ້ຢູ່ພາຍໃຕ້ພຣະບັນຍັດແລ້ວ. ເນື່ອງຈາກພວກເຂົາໄດ້ດຳລົງຊີວິດຢູ່ພາຍໃຕ້ກົດບັນຍັດມາເປັນເວລາຫຼາຍຮ້ອຍປີ, ພວກເຮົາຫວັງວ່າ ພຣະຄຳພີຄົງບອກພວກເຮົາວ່າ ມີການປ່ຽນແປງທີ່ສຳຄັນແນວໃດແດ່ກັບຊາວອິດສະຣາເອນ. ແຕ່ກໍບໍ່ມີຫຼັກຖານຫຍັງເລີຍວ່າ ພຣະບັນຍັດໄດ້ຖືກຳນົດໄວ້ ຫຼື ປ່ຽນແທນໂດຍພຣະຄຸນ.

ໃນທາງກົງກັນຂ້າມ, ມີຫຼັກຖານຢ່າງຫຼວງຫຼາຍທີ່ສະແດງໃຫ້ເຫັນວ່າ ອິດສະຣາເອນຍັງໃຊ້ຊີວິດຢູ່ພາຍໃຕ້ພຣະບັນຍັດ. ພວກເຮົາໄດ້ອ່ານໃນກິດຈະການ 2:46 ວ່າພວກເຂົາໄດ້ “ແຕ່ລະວັນ ພວກເຂົາໄດ້ໝັ້ນເຕົ້າໂຮມກັນນະມັດສະການໃນບໍລິເວນພຣະວິຫານ...” ແລະໃນກິດຈະການ 3:1 ພວກເຮົາອ່ານວ່າ “ບັດນີ້ ເປໂຕ ແລະ ໂຢຮັນໄດ້ຂຶ້ນໄປທີ່ພຣະວິຫານໃນຕອນບ່າຍສາມໂມງ ເພາະເປັນເວລາພາວັນນາອະທິຖານ.” ດັ່ງນັ້ນ, ພວກເຮົາເຫັນວ່າ ອັກຄະສາວົກບໍ່ໄດ້ເລີ່ມການບຸກເບີກຄຣິສຕະຈັກ ເພື່ອໃຊ້ເປັນບ່ອນນະມັດສະການ, ແຕ່ໄດ້ສືບຕໍ່ການນະມັດສະການເປັນປະຈຳວັນໃນພຣະວິຫານຂອງຊາວຢິວໃນນະຄອນເຢຣູຊາເລັມ.

ໃນກິດຈະການບົດທີສິບຫ້າ ພວກເຮົາອ່ານກ່ຽວກັບຂໍ້ຂັດແຍ່ງເລື່ອງພຣະບັນຍັດທີ່ເກີດຂຶ້ນ. ບາງຂໍ້ໄດ້ສອນວ່າ, “ຖ້າເຈົ້າທັງຫຼາຍບໍ່ຮັບພິທີຕັດຕາມຮີດຄອງຂອງໂມເຊ ພວກເຈົ້າຈະພົ້ນບໍ່ໄດ້” (ຂໍ້ 1). ໂປໂລ ແລະ ບາຣະນາບາຖືກກ່າວຫາວ່າພວກເຂົາໄດ້ສອນຄົນຕ່າງຊາດວ່າ ບໍ່ຈຳເປັນຕ້ອງໃຊ້ຊີວິດພາຍໃຕ້ພຣະບັນຍັດຂອງໂມເຊ. “ຝ່າຍພວກອັກຄະສາວົກ ແລະເຖົ້າແກ່ກໍໄດ້ປະຊຸມກັນພິຈາລະນາບັນຫານີ້” (ກິດຈະການ 15:6).

ຮູບ

ທີ່ມາ: https://filedn.com/lD0GfuMvTstXgqaJfpLL87S/sweet_images/jpg/44/44_Ac_15_01_RG.jpg -
ໃຊ້ສຳລັບເປັນຕົວຢ່າງຂອງກິດຈະການ 15:1 ເທົ່ານັ້ນ

ໃນການສຶກສາແບບສັ້ນໆ ນີ້ພວກເຮົາບໍ່ສາມາດຂຽນເປັນລາຍລະອຽດກ່ຽວກັບກິດຈະການບົດທີສິບຫ້າໄດ້. ແຕ່ພວກເຮົາຕ້ອງຊີ້ແຈງໃຫ້ເຫັນຄວາມຈິງທີ່ກ່ຽວຂ້ອງຈຳນວນໜຶ່ງ.

1) ໃນກິດຈະການບົດທີ 15, ຂໍ້ໂຕ້ແຍ້ງເລື່ອງຄົນຕ່າງຊາດຕ້ອງໃຊ້ຊີວິດພາຍໃຕ້ພຣະບັນຍັດຫລືບໍ່. ພວກເຂົາບໍ່ໄດ້ປຶກສາກັນກ່ຽວກັບຄຳຖາມທີ່ວ່າ ຊາວຢິວຕ້ອງຢູ່ພາຍໃຕ້ພຣະບັນຍັດຫລືບໍ່. ແຕ່ຊາວຢິວຕ້ອງເຊື່ອຟັງພຣະບັນຍັດແນ່ນອນ! ທຸກຄົນໄດ້ຕົກລົງເຫັນດີກ່ຽວກັບເລື່ອງນີ້.

2) ຖ້າເປໂຕ ແລະ ອັກຄະສາວົກຄົນອື່ນໆ ເລີ່ມສອນໃນພຣະທຳກິດຈະການບົດທີ 2 ວ່າ "ເຈົ້າບໍ່ໄດ້ຢູ່ພາຍໃຕ້ກົດບັນຍັດ, ແຕ່ພາຍໃຕ້ພຣະຄຸນ," ແນ່ນອນຈະບໍ່ມີການຂັດແຍ່ງກ່ຽວກັບເລື່ອງນີ້ຕໍ່ມາໃນກິດຈະການ 15. ເມື່ອຊາວຍິວໄດ້ຍິນໂປໂລ ແລະ ບາຣະນາບາປະກາດວ່າ, "ອັນນີ້ຄືກັນ."

ສິ່ງທີ່ເປໂຕໄດ້ສອນໃນວັນເພນເຕຄໍສະເຕ (ໃນກິດຈະການບົດທີ 2). ແຕ່ຢູ່ໃນນັ້ນເປັນການໂຕ້ຖຽງກັນຢ່າງໃຫຍ່ຫຼວງກ່ຽວກັບບັນຫານີ້ (ກິດຈະການ 15:1-7). ໂດຍຢ່າງຊັດເຈນແລ້ວເປໂຕ ແລະ ຄົນອື່ນໆບໍ່ໄດ້ສອນວ່າຄົນຕ່າງຊາດຢູ່ພາຍໃຕ້ພຣະຄຸນ, ແທນທີ່ຈະຢູ່ພາຍໃຕ້ກົດຫມາຍ.

ຕໍ່ມາ, ເມື່ອໂປໂລກັບຄືນໄປເມືອງເຢຣູຊາເລມ ແລະ ໄດ້ຍິນຢາໂກໂບບອກວ່າ, "ອ້າຍເອີຍ ເຈົ້າກໍເຫັນຊາວຍິວຫລາຍໝື່ນຄົນໄດ້ວາງໃຈເຊື່ອ ແລະ ຄົນພວກນີ້ກໍຮ້ອນຮົນໃຈໃນການທີ່ເຊື່ອຖືກົດບັນຍັດຢ່າງເຄັ່ງຄັດ" (ກິດຈະການ 21:20). ສັງເກດວ່າ ອັນນີ້ເວົ້າເຖິງຊາວຍິວ "ຜູ້ທີ່ເຊື່ອ" ແລະ ພວກເຂົາທັງຫມົດແມ່ນເຄັ່ງຄັດກັບການໃຊ້ຊີວິດພາຍໃຕ້ພຣະບັນຍັດຂອງໂມເຊ.

ພຣະທຳກິດຈະການສອນພວກເຮົາຢ່າງຊັດເຈນວ່າ ຊາວອິດສະຣາເອນຍັງໃຊ້ຊີວິດຢູ່ພາຍໃຕ້ກົດບັນຍັດໃນລະຫວ່າງ ກິດຈະການບົດທີ 1-7 (ແລະບາງເວລາຫຼັງຈາກນັ້ນ).

<u>ວາລະອານາຈັກເທິງແຜ່ນດິນໂລກ</u>

ຜູ້ທີ່ເຊື່ອໃນສະໄໝພຣະຄຳພີເດີມ ແລະ ພວກສາວົກໃນມັດທາຍ, ມາຣະໂກ, ລູກາ ແລະ ໂຢຮັນ ບໍ່ໄດ້ຮັບພຣະສັນຍາເລື່ອງບ້ານອັນນິລັນດອນໃນສະຫວັນ. ແຕ່ພວກເຂົາໄດ້ຮັບພຣະສັນຍາເລື່ອງອານາຈັກເທິງແຜ່ນດິນໂລກທີ່ຕັ້ງຢູ່ເປັນນິດ. ໃນເຈັດບົດທຳອິດຂອງພຣະທຳກິດຈະການ, ພວກສາວົກໄດ້ຮັບພຣະສັນຍາເລື່ອງບ້ານໃນສະຫວັນບໍ? ຫຼືພວກເຂົາຍັງຊອກຫາອານາຈັກຂອງພຣະເຈົ້າທີ່ຈະມາເຖິງເທິງແຜ່ນດິນໂລກ? "ເມື່ອພວກອັກຄະສາວົກມາເຕົ້າໂຮມກັນ ເພື່ອພົບພຣະເຢຊູເຈົ້າ ພວກເພິ່ນຈຶ່ງຖາມພຣະອົງວ່າ ຂ້ານ້ອຍເດພຣະອົງເຈົ້າ ພຣະອົງຈະໃຫ້ຊົນຊາດອິດສະຣາເອນໄດ້ຮັບອຳນາດຄືນໃນເວລານີ້ບໍ?" (ກິດຈະການ 1:6). ບໍ່ຕ້ອງສົງໄສເລີຍ ພວກສາວົກຍັງຊອກຫາວາລະອານາຈັກຢູ່ເທິງແຜ່ນດິນໂລກ.

ຮູບ

ທີ່ມາ: https://filedn.com/lD0GfuMvTstXgqaJfpLL87S/sweet_images/jpg/44/44_Ac_01_02_RG.jpg - ໃຊ້ສຳລັບເປັນຕົວຢ່າງຂອງກິດຈະການ 1:6 ເທົ່ານັ້ນ

ມີບາງຄົນທີ່ສອນວ່າ ພວກສາວົກເປັນຄົນໂງ່ ຫຼື ບໍ່ເຊື່ອ ຕອນທີ່ພວກເຂົາຖາມຄຳຖາມໃນພຣະທຳກິດຈະການ 1:6. ຄູສອນເຫຼົ່ານີ້ອ້າງວ່າ ພວກສາວົກບໍ່ໄດ້ເຂົ້າໃຈການປ່ຽນແປງແຜນການຂອງພຣະເຈົ້າ. ທີ່ຈິງແລ້ວ, ພວກສາວົກຄວນຈະສະແຫວງຫາການໄດ້ໄປສະຫວັນ ຫຼາຍກວ່າທີ່ຈະຊອກຫາອານາຈັກເທິງແຜ່ນດິນໂລກ. ແຕ່ພວກສາວົກມີຄວາມເຂົ້າໃຈກ່ຽວກັບພຣະຄຳພີທີ່ຊົງເປີດເຜີຍກ່ອນທີ່ຈະຖາມຄຳຖາມໃນກິດຈະການ 1:6 (ເບິ່ງ ລູກາ 24:45).

ຫຼັງຈາກການຟື້ນຄືນພຣະຊົນຂອງພຣະອົງ, ພຣະເຢຊູຄຣິດໄດ້ສອນສາວົກຂອງພຣະອົງເລື່ອງອານາຈັກຂອງພຣະເຈົ້າເປັນເວລາສີ່ສິບວັນ (ກິດຈະການ 1:3). ພວກສາວົກບໍ່ໄດ້ໂງ່ ເມື່ອພວກເຂົາຖາມວ່າ, "ພຣະອົງຈະໃຫ້ຊົນຊາດອິດສະຣາເອນໄດ້ຮັບອຳນາດຄືນໃນເວລານີ້ບໍ?"—ພວກເຂົາເຂົ້າໃຈວ່າ ພຣະເຈົ້າຈະເຮັດແນວໃດ, ແຕ່ບໍ່ຮູ້ວ່າ ພຣະອົງຈະເລີ່ມເມື່ອໃດ. ພວກເຂົາຮູ້ວ່າ ພຣະເຈົ້າໄດ້ສັນຍາວ່າ ຈະສົ່ງພຣະເມຊີອາໄປນັ່ງເທິງບັນລັງຂອງດາວິດ (ກິດຈະການ 2:30).

ໃຫ້ໄປອ່ານກິດຈະການ 3:19-21. ເຈົ້າຈະເຫັນວ່າ ພວກສາວົກຄອງຄອຍການສະເດັດກັບມາຂອງພຣະເຢຊູຄຣິດ. ພວກເຂົາບໍ່ໄດ້ຄາດຫວັງວ່າ ຈະໄດ້ໄປສະຫວັນ. ພຣະສັນຍາຄື ພຣະຄຣິດຈະສະເດັດກັບມາ ແລະ ຟື້ນຟູທຸກສິ່ງເທິງແຜ່ນດິນໂລກ ຫຼັງຈາກອິດສະຣາເອນກັບໃຈໃຫມ່ ແລະ ມີຄວາມເຊື່ອອີກຄັ້ງ. ດັ່ງນັ້ນ, ພວກເຮົາຮູ້ວ່າ, ໃນຊ່ວງເວລາຂອງກິດຈະການ 1-7, ພວກສາວົກບໍ່ໄດ້ຮັບພຣະສັນຍາວ່າ ພວກເຂົາຈະໄປສະຫວັນ. ພວກເຂົາໄດ້ຮັບພຣະສັນຍາເລື່ອງອານາຈັກເທິງແຜ່ນດິນໂລກ ທີ່ກ່າວໄວ້ໂດຍຜູ້ທຳນວາຍໃນພຣະສັນຍາເດີມ.

<u>ອິດສະຣາເອນ: ຊົນຊາດທີ່ພຣະເຈົ້າຊົງເລືອກ</u>

ຈາກການສຶກສາກ່ອນຫນ້ານີ້, ພວກເຮົາໄດ້ຮຽນຮູ້ວ່າ ພຣະເຈົ້າໄດ້ຊົງເລືອກອິດສະຣາເອນເປັນຊາດຂອງພຣະອົງ ຊຶ່ງຢູ່ ເຫນືອທຸກຊາດ. ອິດສະຣາເອນຖືຕໍາແຫນ່ງພິເສດໃນພຣະຄໍາພີເດີມ ແລະ ສືບຕໍ່ໃນພຣະທໍາມັດທາຍ, ມາຣະໂກ, ລູກາ ແລະ ໂຢຮັນ. ໃນກິດຈະການ 1-7, ອິດສະຣາເອນຍັງມີຕໍາແຫນ່ງພິເສດເຫືອທຸກຊາດບໍ? ຫຼືຄົນຕ່າງຊາດໄດ້ຮັບຕໍາແຫນ່ງທີ່ມີຄວາມສະເຫມີພາບກັບຊາວຢິວແລ້ວ?

ເພື່ອຕອບຄໍາຖາມນີ້, ເຮົາຈະເຕືອນຜູ້ອ່ານຈາກກິດຈະການ 1:6. ເປັນພຣະທໍາທີ່ເວົ້າເລື່ອງອານາຈັກທີ່ຖືກກອບກູ້ໃຫ້ແກ່ຊາວອິດສະຣາເອນ. ເຫັນໄດ້ຢ່າງຊັດເຈນ, ພວກສາວົກຄິດວ່າ ອິດສະຣາເອນຍັງຖືຕໍາແຫນ່ງພິເສດຢູ່. ການອ່ານເຈັດບົດທໍາອິດໃນກິດຈະການຈະຢືນຢັນວ່າ ອັກຄະສາວົກມີຄວາມຄິດທີ່ຖືກຕ້ອງກ່ຽວກັບເລື່ອງນີ້. ເປໂຕ ແລະ ອັກຄະສາວົກຄົນອື່ນແມ່ນເຕັມໄປດ້ວຍພຣະວິນຍານບໍລິສຸດ (ກິດຈະການ 2:4) ແລະ ໃນເວລາທີ່ເປໂຕປະກາດ ລາວໄດ້ກ່າວກັບຊາວຢິວທີ່ອາໄສຢູ່ໃນເຢຣູຊາເລັມ (ກິດຈະການ 2:5). ດັ່ງທີ່ພວກເຮົາໄດ້ຮຽນຮູ້ມາຕະຫຼອດໃນພຣະທໍາກິດຈະການ, ຜູ້ທີ່ມາຟັງການປະກາດຂອງເປໂຕໃນພຣະທໍາກິດຈະການບົດທີ 2 ແມ່ນຊາວຢິວທັງຫມົດ. ຖ້າມີຄົນຕ່າງຊາດເຂົ້າຮ່ວມຟັງນໍາ, ເປໂຕຈະບໍ່ກ່າວຫຍັງກັບພວກເຂົາເລີຍ ແມ່ນແຕ່ຄໍາດຽວ.

ເປໂຕເວົ້າກັບ "ຊາວອິດສະຣາເອນ" ໃນບົດທີ 3 (ຂໍ້ທີ 12). ລາວໄດ້ກ່າວກັບພວກເຂົາວ່າ, "ພວກເຈົ້າທັງຫລາຍເປັນລູກຂອງຜູ້ທໍານວາຍ ແລະ ເປັນພັນທະສັນຍາທີ່ພຣະເຈົ້າໄດ້ຊົງສັນຍາໄວ້ກັບບັນພະບູລຸດຂອງພວກເຮົາ" (ຂໍ້ 25-6). ອິດສະຣາເອນຖືກເອີ້ນວ່າ ເປັນລູກຫຼານຂອງພວກຜູ້ປະກາດພຣະທໍາ ແລະພັນທະສັນຍາ, ຊຶ່ງບໍ່ແມ່ນຊາດອື່ນ. ອີກເທື່ອຫນຶ່ງ, ພວກເຮົາເຫັນເປໂຕກ່າວເຖິງອິດສະຣາເອນມາຕະຫຼອດ, ບໍ່ແມ່ນຄົນຕ່າງຊາດ. ເປໂຕເວົ້າເຖິງພຣະເຢຊູຄຣິດໃນບົດທີຫ້າ ວ່າ, "ພຣະເຈົ້າໄດ້ຍົກພຣະເຢຊູເຈົ້າຂຶ້ນສູ່ກໍ້າຂວາພຣະຫັດຂອງພຣະອົງ ໃຫ້ເປັນພຣະຜູ້ນໍາ ແລະ ພຣະຜູ້ໂຜດຊ່ວຍໃຫ້ພົ້ນ ເພື່ອໃຫ້ປະຊາຊົນອິດສະຣາເອນມີໂອກາດກັບໃຈໃຫມ່ ແລະ ຮັບເອົາການອະໄພບາບກໍາຂອງພວກເຂົາ" (ກິດຈະການ 5:31). ທຸກສິ່ງທຸກຢ່າງທີ່ຂຽນໄວ້ໃນກິດຈະການບົດທີ 1-7 ເຮັດໃຫ້ພວກເຮົາສະຫຼຸບໄດ້ວ່າ ຕອນນັ້ນ ຊາວຢິວ ແລະ ຄົນຕ່າງຊາດບໍ່ເທົ່າທຽມກັນໃນສາຍພຣະເນດຂອງພຣະເຈົ້າ. ອິດສະຣາເອນຍັງໄດ້ຮັບຕໍາແຫນ່ງທີ່ເຫືອກວ່າ.

[ໃນບົດຮຽນຕໍ່ໄປ ເຮົາຈະຮຽນພຣະທໍາກິດຈະການຕໍ່.]

<u>ຄໍາຖາມທວນຄືນ ບົດຮຽນ 21- ອັກຄະສາວົກເວົ້າເຖິງຊົນຊາດອິດສະຣາເອນ</u>

<u>ຖືກ ຫຼື ຜິດ</u>

1. ໃນພຣະຄໍາພີໃຫມ່, ພຣະທໍາກິດຈະການແມ່ນມາຫຼັງຈາກພຣະທໍາມັດທາຍ, ມາຣະໂກ, ລູກາ ແລະ ໂຢຮັນ ແລະ ບອກສິ່ງທີ່ເກີດຂຶ້ນຫຼັງຈາກພຣະທໍາທັງສີ່ເຫຼັ້ມນີ້ສິ້ນສຸດລົງແລ້ວ.
2. ທຸກຄຣິສຕະຈັກໃນທຸກວັນນີ້ຍັງສອນວ່າ ພວກສາວົກຍັງສືບຕໍ່ໃຊ້ຊີວິດພາຍໃຕ້ພຣະບັນຍັດຫລັງຈາກທີ່ພຣະຄຣິດໄດ້ສິ້ນພຣະຊົນ ແລະ ຟື້ນຄືນຊີວິດແລ້ວ.

3. ເມື່ອເຮົາອ່ານກິດຈະການ 15 ເຮົາພົບວ່າ ທຸກຄົນເຫັນດີໃຫ້ຜູ້ທີ່ເຊື່ອໃນພຣະເຈົ້າໝົດທຸກຄົນໃຊ້ຊີວິດພາຍໃຕ້ພຣະຄຸນຂອງພຣະເຈົ້າ, ບໍ່ແມ່ນຢູ່ພາຍໃຕ້ກົດບັນຍັດ.

4. ຜູ້ທີ່ເຊື່ອໃນພຣະຄຳຂອງພຣະເຈົ້າໄດ້ຮັບພຣະສັນຍາວ່າ ຈະໄດ້ຮັບບ້ານນິລັນດອນໃນສະຫວັນ.

<u>ຄຳຖາມແບບປາລະໄນ</u>

5. ໃນກິດຈະການ 3:19-21 ເຮົາຮຽນຮູ້ວ່າ ພວກສາວົກຖືກສອນວ່າ:

ກ) ພຣະເຢຊູຄຣິດຈະສະເດັດກັບມາຄັ້ງທີສອງ ແລະ ສ້າງສາອານາຈັກຂອງພຣະອົງ ທັງຟື້ນຟູທຸກຢ່າງເທິງແຜ່ນດິນໂລກໃໝ່.

ຂ) ພວກເຂົາທັງຫມົດຈະຖືກນຳຂຶ້ນໄປສະຫວັນ.

ຄ) ພວກເຂົາບໍ່ຈຳເປັນຕ້ອງຖວາຍສັດບູຊາອີກຕໍ່ໄປແລ້ວ.

ງ) ອິດສະຣາເອນບໍ່ແມ່ນຊົນຊາດທີ່ພຣະເຈົ້າຊົງເລືອກອີກຕໍ່ໄປແລ້ວ.

6. ກິດຈະການ 1:6 ສະແດງໃຫ້ເຫັນວ່າ:

ກ) ໃນຕອນນັ້ນ, ພວກສາວົກບໍ່ໄດ້ເຂົ້າໃຈເຖິງພຣະປະສົງຂອງພຣະເຈົ້າ.

ຂ) ຄຣິສຕະຈັກ, ພຣະກາຍຂອງພຣະຄຣິດຈະເລີ່ມຕົ້ນໃໝ່ໃນໄວໆນີ້.

ຄ) ພວກສາວົກຍັງສະແຫວງຫາໃຫ້ພຣະເຈົ້າ ສ້າງຕັ້ງອານາຈັກຂອງພຣະອົງຂຶ້ນໃນອິດສະຣາເອນ.

ງ) ພວກສາວົກບໍ່ເຂົ້າໃຈພຣະຄຳພີ.

7. ພຣະເຈົ້າຮຽກຮ້ອງໃຫ້ຊາວອິດສະຣາເອນຖືຮັກສາພຣະບັນຍັດ:

ກ) ໃນສະໄຫມພຣະສັນຍາເດີມ

ຂ) ເມື່ອພວກເຂົາເຮັດບາບຕໍ່ພຣະອົງເທົ່ານັ້ນ

ຄ) ເມື່ອພຣະຄຣິດຢູ່ເທິງແຜ່ນດິນໂລກ (ມັດທາຍ, ມາລະໂກ, ລູກາ ແລະ ໂຢຮັນຂຽນກ່ຽວກັບຕອນນີ້)

ງ) ໃນຊ່ວງເວລາທີ່ຖືກຂຽນໄວ້ໃນກິດຈະການ 1-7

<u>ຕື່ມໃສ່ຊ່ອງຫວ່າງ</u>

8. ໃນກິດຈະການ 1-7, ອິດສະຣາເອນຍັງໃຊ້ຊີວິດຢູ່ພາຍໃຕ້________________________.

9. ໃນກິດຈະການ 21, ຢາໂກໂບບອກໂປໂລວ່າ ຊາວຢິວທັງໝົດທີ່ເຊື່ອເປັນ__________ຂອງພຣະບັນຍັດ.

10 ພຣະອົງເຈົ້າເອີຍ, ໃນເວລານີ້ພຣະອົງຈະຟື້ນຟູອານາຈັກອີກເທື່ອຫນຶ່ງໃຫ້ແກ່______________ບໍ?